ກະຊວງອຸດສາຫະກຳ ແລະ ການຄ້າ

ສະຖາບັນອຸດສາຫະກຳ ແລະ ການຄ້າ

# ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

## ການຜະລິດກະສິກຳ ແລະ ການຄ້າ ໄລຍະເງິນກີບອ່ອນຄ່າ ແລະ ນ້ຳມັນແພງ





11 ເມສາ 2022


### ສະຫຼຸບຫຍໍ້

ການປ່ຽນແປງຂອງອັດຕາແລກປ່ຽນ ບວກກັບການເພີ່ມຂຶ້ນຂອງລາຄານ້ຳມັນນັບແຕ່ຕົ້ນປີ 2022 ໄດ້ເຮັດໃຫ້ຕົ້ນທຶນການຜະລິດກະສິກຳເພີ່ມຂຶ້ນໂດຍສະເພາະແມ່ນຝຸ່ນເຄມີ ແລະ ທີ່ອາຫານສັດທີ່ໄດ້ນຳເຂົ້າມາຈາກຕ່າງປະເທດ. ການເພີ່ມຂຶ້ນຂອງຕົ້ນທຶນການຜະລິດລ້ຽງສັດໄດ້ເຮັດໃຫ້ລາຄາສິນຄ້າຊີ້ນໝູ, ໄກ່ ແລະປາຕ່າງໆກໍເພີ່ມຂຶ້ນທັງໝົດໃນເດືອນເມສາທຽບກັບເດືອນມັງກອນຂອງປີນີ້. ຜົນກະທົບຂອງຕົ້ນທຶນທີ່ສູງຂຶ້ນຍັງຈະກະທົບ ຕໍ່ລາຄາພືດຜັກໃນລະດູຜົນເກັບກ່ຽວລະດູຝົນຈະມາເຖິງ. ທັງໝົດໄດ້ກະທົບໂດຍກົງຕໍ່ຜູ້ບໍລິໂພກທີ່ຕ້ອງຊື້ໃນລາຄາທີ່ແພງຂຶ້ນທັງສິນຄ້າຜະລິດຢູ່ພາຍໃນ ແລະ ນຳເຂົ້າ.

ມາດຕະການແກ້ໄຂທີ່ຄວນພິຈາລະນາລວມມີ: ເພີ່ມອັດຕາດອກເບ້ຍທະນາຄານໃນຊ່ວງໄລຍະນີ້ໃຫ້ສູງຂຶ້ນເພື່ອດຶງດູດເງິນຕາຕ່າງປະເທດໃຫ້ເຂົ້າສູ່ລະບົບທະນາຄານ, ຄຸ້ມຄອງການແລກປ່ຽນເງິນຕາຕ່າງປະເທດໃຫ້ເຂັ້ມງວດ, ສົ່ງເສີມການຊຳລະສິນຄ້າສົ່ງອອກໂດຍຜ່ານບັນຊີຢູ່ທະນາຄານພາຍໃນປະເທດ ແລະ ທຸກທຸລະກຳການຄ້າ-ບໍລິການຕ່າງໆຢູ່ພາຍໃນປະເທດຕ້ອງເປັນເງິນກີບ. ສ້າງຄວາມເຂັ້ມແຂງໃຫ້ການຜະລິດພາຍໃຫ້ສາມາດຫຼຸດຜ່ອນການນຳເຂົ້າ ແລະ ກຸ້ມຕົນເອງສຳລັບສິນ ຄ້າທີ່ມີຄວາມຈຳເປັນໃນຊີວິດປະຈຳວັນ. ສຸດທ້າຍແມ່ນສົ່ງເສີມການສົ່ງອອກສິນຄ້າທ່າແຮງຕ່າງໆເພື່ອເພີ່ມເງິນຕາຕ່າງປະເທດໃນລະບົບເສດຖະກິດຂອງປະເທດ.

# ສະພາບການຜະລິດ ແລະ ການຄ້າ ໄລຍະ ເງິນກີບອ່ອນຄ່າ ແລະ ນ້ຳມັນແພງ

ໂດຍ ວຽງສະຫວ່າງ ທິບພະວົງ[1]

## ພາກສະເໜີ

ຜົນກະທົບຈາກພາຍນອກຕໍ່ເສດຖະກິດຂອງປະເທດແມ່ນບັນຫາທີ່ຫຼີກລ້ຽງໄດ້ຍາກໃນຍຸກປັດຈຸບັນ. ການຜະລິດ ແລະ ການຄ້າ ຂອງປະເທດແມ່ນສອງອົງປະກອບເສດຖະກິດທີ່ມີຄວາມອ່ອນໄຫວໄວຕໍ່ສະພາບການປ່ຽນແປງຂອງເສດຖະກິດໂລກ. ຄວາມກົດດັນຕໍ່ຕ່ອງໂສ້ການສະໜອງນ້ຳມັນໂລກທີ່ເກີດຈາກການປະຕິບັດການພິເສດດ້ານການທະຫານຂອງປະເທດລັດເຊຍຕໍ່ປະເທດຢູເຄຼນໄດ້ເຮັດໃຫ້ຕະຫຼາດນ້ຳມັນໂລກປັ່ນປ່ວນ ເກີດຄວາມຢ້ານກົວດ້ານການສະໜອງບໍ່ພຽງພໍຍ້ອນການລົງໂທດດ້ານເສດຖະກິດຕໍ່ປະເທດລັດເຊຍທີ່ເປັນປະເທດສົ່ງອອກນ້ຳມັນໃຫ່ຍອັນດັບ 3 ແລະ ອາຍແກັສລາຍໃຫຍ່ອັນດັບ 2 ຂອງໂລກ[2].

ການເພີ່ມຂຶ້ນຂອງລາຄານ້ຳມັນດິບຊື້ຂາຍໃນຕະຫຼາດໂລກຈາກທ້າຍປີ 2021 ໃນລາຄາລະຫວ່າງ 77,97 ໂດລາຕໍ່ບາເລວ ຫຼື ປະມານ 159 ລິດມາເປັນ 100,12 ໂດລາຕໍ່ບາເລວໃນວັນທີ 7 ເມສາ 2022[3] (ເພີ່ມຂຶ້ນ 28%); ບວກກັບສະພາບເສດຖະກິດໂລກທີ່ຍັງບໍ່ທັນຟື້ນໂຕຢ່າງເຕັມທີ່ຈາກຜົນກະທົບຂອງການລະ ບາດຂອງໂຄວິດ-19 ໄດ້ເຮັດໃຫ້ປະເທດທີ່ມີຂະໜາດເສດຖະກິດນ້ອຍ ແລະ ເພິ່ງພາການນຳເຂົ້າເປັນສ່ວນໃຫຍ່ຕ້ອງພົບບັນຫາທີ່ທ້າທາຍຫຼາຍໃນການຄຸ້ມຄອງເສດຖະກິດມະຫາພາກໃຫ້ໝັ້ນທ່ຽງໃນຊ່ວງເວລານີ້.

ສປປ ລາວ ນຳເຂົ້ານ້ຳມັນ, ກົນຈັກ, ເຄື່ອງອີເລັກໂຕນິກ, ພາຫະນະຊະນິດຕ່າງໆ ແລະ ເຄື່ອງອຸປະໂພກ-ບໍລິໂພກ ເປັນສ່ວນໃຫຍ່ໃນແຕ່ລະປີ ໂດຍໃນ 2020 ນ້ຳມັນເຊື້ອໄຟກວມ 9%, ກົນຈັກ, ເຄື່ອງອີເລກໂຕນິກ ແລະ ພາຫະນະຕ່າງໆ ກວມ 32%, ເຄື່ອງອຸປະໂພກ-ບໍລິໂພກ ກວມ 30% ແລະ ອື່ນໆ 29%[4]. ການເພິ່ງພາ ນຳເຂົ້າສິນຄ້າສຳເລັດຮູບ-ເຄິ່ງສຳເລັດຮູບ ລວມທັງວັດຖຸດິບຮັບໃຊ້ການຜະລິດໄດ້ເຮັດໃຫ້ປະເທດມີຄວາມສ່ຽງທີ່ຈະໄດ້ຮັບຜົນກະທົບໂດຍກົງຈາກວິກິດການຕ່າງໆທີ່ເກີດຂຶ້ນກັບເສດຖະກິດໂລກ.

ໃນສະພາບທີ່ລາຄານ້ຳມັນໂລກປັບຕົວເພີ່ມຂຶ້ນໃນປັດຈຸບັນ ບວກກັບຜົນກະທົບຈາກໂຄວິດ-19ຕໍ່ເສດຖະກິດຂອງ ສປປ ລາວ ໄດ້ກາຍເປັນແຮງກົດດັນຕໍ່ຜູ້ຜະລິດພາຍໃນປະເທດທີ່ກຳລັງຟື້ນຕົວຈາກໂຄວິດ ຕ້ອງພົບກັບບັນຫານ້ຳມັນແພງ ແລະ ພົບບັນຫາອັດຕາແລກປ່ຽນເງິນກີບທຽບກັບເງິນບາດ ແລະ ໂດລາອາເມລິກາທີ່ອ່ອນຄ່າຫຼຸດລົງຫຼາຍ. ທັງໝົດໄດ້ກະທົບຕໍ່ການຜະລິດ ແລະ ການຄ້າພາຍໃນປະເທດຢ່າງຫຼີກລ້ຽງບໍ່ໄດ້ ເຊິ່ງບົດສຶກສານະໂຍບາຍຫຍໍ້ນີ້ຈະໄດ້ຍົກໃຫ້ເຫັນສະພາບການດຳເນີນທຸລະກິດທີ່ຕັ້ງຢູ່ນະຄອນຫຼວງເປັນຕົວຢ່າງໃນການອະທິບາຍຕໍ່ຜົນກະທົບຂອງນ້ຳມັນແພງ ແລະ ເງິນກີບອ່ອນຄ່າໃນປັດຈຸບັນ.

## ວິທີການສຶກສາ

ການສຶກສາຈະເຮັດໃນຮູບແບບການອະທິບາຍສະພາບການຕົວຈິງທີ່ເກີດຂຶ້ນ ບວກກັບຂໍ້ມູນທີ່ເກັບກຳຈາກບໍລິສັດ ແລະ ກຸ່ມຜູ້ຜະລິດກະສິກຳຢູ່ນະຄອນຫຼວງວຽງຈັນ ລະຫວ່າງວັນທີ 14-25 ມີນາ 2022. ນອກນັ້ນຍັງໄດ້ນຳໃຊ້ຂໍ້ມູນກ່ຽວຂ້ອງຕິດພັນກັບການຜະລິດ ແລະ ການຄ້າທັງພາຍໃນ ແລະ ຕ່າງປະເທດເພື່ອອ້າງອີງ ແລະ ເປັນບົດຮຽນໃນການສະເໜີແນະມາດຕະການແກ້ໄຂຕໍ່ບັນຫາທີ່ເກີດຂຶ້ນ.

---

[1] ຮອງຫົວໜ້າສະຖາບັນອຸດສາຫະກຳ ແລະ ການຄ້າ (ຄະນະຊ່ວຍວຽກຄົ້ນຄວ້າ: ນ. ພິລາວັນ ພິລາກ່ອງ, ທ.ສັນຕິສຸກ ສີສົມບັດ ແລະ ທ. ຈັນທະພອນ ສີລິປັນໂຍ)

[2] ຂໍ້ມູນປະເທດສະໜອງນ້ຳມັນໂລກ ຈາກ Statista (2020)

[3] ຂໍ້ມູນຈາກອົງການປະເທດສົ່ງອອກນ້ຳມັນ OPEC (2022)

[4] ຄິດໄລ່ຈາກສະຖິຕິນຳເຂົ້າ, ກົມການນຳເຂົ້າ ແລະ ສົ່ງອອກ

## ສັງລວມສະພາບລາຄານໍ້າມັນ ແລະ ອັດຕາແລກປ່ຽນ

ລາຄານໍ້າມັນຈາກເດືອນມັງກອນ ເຖິງເດືອນເມສາ 2022 ໄດ້ປັບຂຶ້ນ 45% ສໍາລັບນໍ້າມັນແອັດຊັງ ແລະ ນໍ້າມັນກາຊວນ 64% ຢູ່ນະຄອນຫຼວງວຽງຈັນ[5]. ອັດຕາແລກປ່ຽນລະຫວ່າງວັນທີ 4 ມັງກອນ - 8 ເມສາ 2022 ເງິນໂດລາອາເມລິກາ/ກີບ ອ່ອນຄ່າປະມານ 6% ແລະ ແລະ ເງິນບາດ/ກີບ ອ່ອນຄ່າ 5%[6] ແລະ ອັດຕາເງິນກີບເຟີ້ ຈາກ 6,25% ໃນເດືອນມັງກອນເພີ່ມເປັນ 8,54% ໃນເດືອນມີນາ 2022 (ປ່ຽນແປງ 37%).

## ສະພາບການຜະລິດກະສິກໍາ ແລະ ລ້ຽງສັດ

ຈາກການໃຫ້ຂໍ້ມູນຂອງຫົວໜ້າກຸ່ມປູກຜັກຢູ່ເຂດເມືອງຫາດຊາຍຟອງໄດ້ອະທິບາຍວ່າລາຄານໍ້າມັນແພງ ແລະ ເງິນກີບອ່ອນຄ່າ ຍັງຖືວ່າບໍ່ທັນກະທົບຕໍ່ກັບການຜະລິດໃນໄລຍະດູແລ້ງຂອງປີ 2022 ເທົ່າໃດ ແຕ່ຍອມຮັບວ່າຜົນກະທົບຈາກໂຄວິດ-19 ຍັງສົ່ງຜົນກະທົບຕໍ່ຜູ້ປູກພືດຜັກຫຼາຍສົມຄວນ ເພາະໄດ້ເຮັດໃຫ້ປະລິມານຄວາມຕ້ອງການຂອງຕະຫຼາດຫຼຸດລົງໃນຂະນະທີ່ເນື້ອທີ່ປູກຜັກຍັງເທົ່າເກົ່າ; ປົກກະຕິແລ້ວຜົນຜະລິດຊ່ວງລະດູແລ້ງແມ່ນຈະອອກມາຫຼາຍເພື່ອສະໜອງໃຫ້ບັນດາເທດສະການ ແລະງານບຸນປະເພນີຕ່າງໆ ແຕ່ສອງປີຜ່ານມາເຖິງວ່າຜົນລະປູກຊ່ວງລະດູແລ້ງຈະມີຫຼາຍກໍບໍ່ສາມາດສ້າງລາຍຮັບໄດ້ຫຼາຍຕໍ່ຄອບຄົວຜູ້ປູກຜັກ.

ການເພີ່ມຂຶ້ນຂອງລາຄານໍ້າມັນ ແລະ ເງິນກີບອ່ອນຄ່າ ຈະມີຜົນກະທົບຢ່າງຫຼີກລ້ຽງບໍ່ໄດ້ໃນລະດູປູກຝັງໃນຊ່ວງລະດູຝົນ ເພາະລາຄາປຸຍ ແລະ ແນວພັນຜັກແມ່ນໄດ້ເລີ່ມປັບຕົວຂຶ້ນ ຕົວຢ່າງ ລາຄາປຸຍໄທສູດ 46-00-00 (50 ກິໂລ) ແລະ ສູດ 15-15-15 (50 ກິໂລ) ໃນເດືອນເມສາ 2022 ທຽບກັບລາຄາສະເລ່ຍຂອງປີ 2021 ເພີ່ມຂຶ້ນເປັນ 308.000ກີບ/ເປົາ ແລະ 337.000ກີບ/ເປົາ ຫຼື ສູງຂຶ້ນປະມານ 22% ແລະ 17% ຕາມລໍາດັບ. ດັ່ງນັ້ນ, ຜົນຜະລິດລະດູຝົນຈະມາເຖິງລາ ຄາພືດຜັກຈະເພີ່ມສູງຂຶ້ນຕາມການປ່ຽນແປງຂອງຕົ້ນທຶນ ທີ່ໄດ້ກ່າວມາ.

ຜູ້ລ້ຽງໝູ ແລະ ໄກ່ທົ່ວໄປກໍໄດ້ຮັບກະທົບຈາກລາຄາຫົວອາຫານນໍາເຂົ້າຈາກປະເທດໄທແພງຂຶ້ນປະມານ 29% ສໍາລັບໝູນ້ອຍ (ເປົາ 30ກິໂລ) ແລະ 8% ຫົວອາຫານໄກ່ນ້ອຍ (ເປົາ 30ກິໂລ). ຜູ້ລ້ຽງປາກໍມີຕົ້ນທຶນຊື້ຫົວອາຫານປາທີ່ນໍາເຂົ້າຈາກປະເທດໄທເພີ່ມຂຶ້ນປະມານ 60% (ເປົາ 25 ກິໂລ); ຕໍ່ສະພາບປ່ຽນແປງດ້ານຕົ້ນທຶນດັ່ງກ່າວໄດ້ເຮັດໃຫ້ລາຄາຊີ້ນໝູຢູ່ຕະຫຼາດສົດຂອງນະຄອນຫຼວງວຽງຈັນໃນເດືອນເມສາພົບວ່າລາຄາຊີ້ນໝູກ້ອນແມ່ນເພີ່ມຂຶ້ນ 4%, ລາຄາໄກ່ລາດປອກເພີ່ມ 11% ແລະ ລາຄາປານິນ ເພີ່ມ 16% ຖ້າທຽບກັບເດືອນມັງກອນຂອງປີນີ້. ຢ່າງໃດກໍດີ ຊີ້ນໝູ, ໄກ່ ແລະ ປາ ຖືວ່າເປັນສິນຄ້າທີ່ຢູ່ໃນລາຍການຄຸ້ມຄອງດ້ານລາຄາ (ອີງຕາມດໍາລັດ 474/ນຍ) ຈຶ່ງເຮັດໃຫ້ລາຄາຂາຍໃນຕະຫຼາດປັບຂຶ້ນຊ້າໆເປັນແຕ່ລະຂັ້ນ.

## ສະພາບການຄ້າຍ່ອຍ

ການຄ້າຍ່ອຍຢູ່ຕະຫຼາດນະຄອນຫຼວງວຽງຈັນໄດ້ປັບຂຶ້ນລາຄາຂາຍສິນຄ້າປະເພດຕ່າງໆ. ສິນຄ້ານໍາເຂົ້າຮັບໃຊ້ຄົວເຮືອນຫຼາຍປະເພດເພີ່ມຂຶ້ນແຕ່ 15% ເຖິງຫຼາຍກວ່າ 50% ໂດຍຂຶ້ນກັບປະເພດຂອງສິນຄ້າຖ້າທຽບກັບລາຄາໃນຕົ້ນເດືອນມັງກອນ 2022. ຕົວຢ່າງ ລາຄານໍ້າປາຕຸກນ້ອຍ ຈາກ 10.000 ກີບ ເພີ່ມຂຶ້ນເປັນ 12.000 ກີບ, ນໍ້າມັນພືດ ຈາກ 20.000 ກີບ ເປັນ 28.000 ກີບ/ຕຸກ ແລະ ໝີ່ເຄິ່ງສໍາເລັດຮູບຈາກ 36.000 ກີບ ເປັນ 55.000 ກີບ/ແກັດ[7]. ການປັບລາຄາສິນຄ້າເພີ່ມຂຶ້ນຂອງຮ້ານຄ້າຍ່ອຍຕ່າງໆແມ່ນໄປຕາມການປ່ຽນແປງຂອງອັດຕາແລກປ່ຽນຂອງເງິນກີບກັບເງິນຕາຕ່າງປະເທດ ບວກກັບຕົ້ນທຶນການຂົນສົ່ງທີ່ສູງຂຶ້ນທີ່ເກີດຈາກລາຄານໍ້າມັນທຸກຊະນິດປັບຕົວສູງຂຶ້ນ.

[5] ລາຄານໍ້າມັນລາຍງານໂດຍກະຊວງອຸດສາຫະກໍາ ແລະ ການຄ້າ (ສົມທຽບລາຄາວັນທີ 1/1/2022 ແລະ 9/4/2022).

[6] ຄິດໄລ່ຈາກການລາຍງານອັດຕາແລກປ່ຽນຈາກ ທະນາຄານແຫ່ງ ສປປລາວ (2022) ຄັ້ງວັນທີ 4/1/2022 ແລະ 9/4/2022.

[7] ສົມທຽບຈາກລາຄາແຕ່ເດືອນມັງກອນ ຮອດ 5 ເມສາ 2022

ສະພາບການສະໜອງສິນຄ້າໃຫ້ບັນດາຮ້ານຄ້າຍ່ອຍສັງເກດວ່າຍັງເປັນປົກກະຕິ ແລະຖືວ່າຍັງບໍ່ມີປາກົດການຂາດແຄນສິນຄ້າທີ່ຈຳເປັນຕໍ່ຄົວເຮືອນໃນຊ່ວງຜ່ານມາ; ດັ່ງນັ້ນ, ການປັບຂຶ້ນລາຄາສິນຄ້າແມ່ນເກີດຈາກສະພາບເງິນເຟີ້ ແລະ ຕົ້ນທຶນການຂົນສົ່ງເປັນສຳຄັນ ໂດຍຜູ້ປະກອບ ການແຈ້ງວ່າລາຄາທີ່ຊື້ຈາກປະເທດນຳເຂົ້າແມ່ນປ່ຽນແປງບໍ່ຫຼາຍ ແຕ່ກໍເປັນຫ່ວງລາຄາສິນຄ້າບາງຊະນິດເຊັ່ນປະເພດທາດແປ້ງ ແລະ ນ້ຳມັນພືດທີ່ອາດມີລາຄາເພີ່ມຂຶ້ນອະນາຄົດຍ້ອຍວິກິດການປະຖະກັນລະຫວ່າງປະເທດລັດເຊຍ ແລະ ຢູເຄຼນ.

ນອກຈາກນັ້ນ ອີງຕາມການລາຍງານດັດສະນີລາຄາການຊົມໃຊ້ປະຈຳເດືອນມີນາ 2022[8] ຊີ້ໃຫ້ເຫັນວ່າສິນຄ້າຫຼາຍຊະນິດຈຳໜ່າຍຢູ່ບັນດາຕະຫຼາດໃຫຍ່ຕ່າງໆໃນຂອບເຂດທົ່ວປະເທດ ແມ່ນມີອັດຕາສ່ວນຂອງລາຄາເພີ່ມຂຶ້ນເກືອບທັງໝົດ ຖ້າທຽບກັບເດືອນກຸມພາ 2022; ປະເພດສິນຄ້າທີ່ຢູ່ໃນລາຍການຄຸ້ມຄອງໄດ້ປັບ ຕົວເພີ່ມຂຶ້ນເມື່ອສົມທຽບເດືອນມີນາ ແລະ ເດືອນກຸມພາ ໂດຍລວມເພີ່ມຂຶ້ນ 1,1% ແຕ່ຖ້າທຽບກັບໄລຍະດຽວຂອງປີຜ່ານມາແມ່ນເພີ່ມຂຶ້ນເຖິງ 7%. ອັດຕາການປ່ຽນແປງຂອງລາຄາໃນໝວດສິນຄ້ານີ້ລວມມີນ້ຳມັນເຊື້ອໄຟ 14,9%↑, ຄຳຮູບປະພັນ 6%↑, ອາຍແກັສ 3,7%↑, ແລະ ອາຫານສົດ 1,6%↑. ໃນກໍລະນີສິນຄ້າທີ່ຢູ່ນອກລາຍການຄຸ້ມຄອງຂອງລັດຖະບານ ໂດຍລວມກໍມີການປ່ຽນແປງດ້ານລາຄາເພີ່ມຂຶ້ນ 1,52%; ໃນນີ້ໝວດສິນຄ້າປະເພດອາຫານສຳເລັດຮູບ ແລະທາດແປ້ງເພີ່ມຂຶ້ນຫຼາຍກວ່າໝູ່ 4,3%↑ ທຽບກັບເຄື່ອງປຸງແຕ່ງອາຫານ 3,5%↑, ແລະ ເຄື່ອງດື່ມບໍ່ແມ່ນທາດເຫຼົ້າ 1,7%↑.

ການເພີ່ມຂຶ້ນຂອງລາຄາສິນຄ້າຍັງເກີດຂຶ້ນໃນບັນດາສິນຄ້າທີ່ຜະລິດຢູ່ພາຍໃນປະເທດ ເຊິ່ງອັດຕາການປ່ຽນແປງດ້ານດັດສະນີລາຄາໄດ້ເພີ່ມຂຶ້ນ 6,1% ໃນເດືອນມີນາ ຈາກ 5,3% ໃນເດືອນກຸມພາ (ປ່ຽນແປງ 15,1%). ການເພີ່ມຂຶ້ນຂອງສິນຄ້າທີ່ຜະລິດຢູ່ພາຍໃນປະເທດໄດ້ສະທ້ອນໃຫ້ເຫັນເຖິງຕົ້ນທຶນຂອງການຜະລິດທີ່ສູງຂຶ້ນຈາກຜົນກະທົບຂອງການປ່ຽນແປງດ້ານອັດຕາແລກປ່ຽນ ແລະ ລາຄານ້ຳມັນໃນໄລຍະຜ່ານມາ. ສິນຄ້ານຳເຂົ້າຂອງເດືອນ ມີນາໂດຍລວມລາຄາປັບຕົວສູງຂຶ້ນ 14% ຈາກ 11,7% ໃນເດືອນກຸມພາ (ປ່ຽນແປງ 20%); ຢ່າງໃດກໍດີຖ້າທຽບກັບປະເທດໄທມີອັດຕາເງິນເຟີ້ຕໍ່ລາຄາສິນຄ້າໂດຍລວມແມ່ນເພີ່ມຂຶ້ນເຊັ່ນກັນ ແຕ່ກໍມີອັດຕາສ່ວນໜ້ອຍກວ່າປະເທດລາວ ຄື 1,06% ໃນເດືອນກຸມພາ ແລະ 0,66% ຂອງເດືອນມີນາ[9] (ຖ້າສົມທຽບເດືອນກຸມພາ ແລະ ມີນາ ປ່ຽນແປງຫຼຸດລົງ 38%) ເຊິ່ງໝາຍວ່າລາຄາສິນຄ້າຢູ່ປະເທດບໍ່ເພີ່ມຂຶ້ນຫຼາຍ.

## ສະຫຼຸບລວມ

ການປ່ຽນແປງຂອງອັດຕາແລກປ່ຽນ ບວກກັບການເພີ່ມຂຶ້ນຂອງລາຄານ້ຳມັນນັບແຕ່ຕົ້ນປີໄດ້ເຮັດໃຫ້ຕົ້ນທຶນການຜະລິດກະສິກຳເພີ່ມຂຶ້ນ ໂດຍສະເພາະແມ່ນປຸ່ຍເຄມີ ແລະ ຫົວອາຫານສັດທີ່ໄດ້ນຳເຂົ້າມາຈາກຕ່າງປະເທດ. ການເພີ່ມຂຶ້ນຂອງຕົ້ນທຶນການຜະລິດລ້ຽງສັດໄດ້ເຮັດໃຫ້ລາຄາສິນຄ້າຊີ້ນໝູ, ໄກ່ ແລະ ປາ ຕ່າງກໍເພີ່ມຂຶ້ນທັງໝົດ ຖ້າສົມທຽບຕົວເລກຂອງເດືອນເມສາ ກັບເດືອນມັງກອນຂອງປີນີ້. ພືດຜັກກໍມີທິດທາງຂອງລາຄາເພີ່ມຂຶ້ນໃນລະດູຜົນເກັບກ່ຽວລະດູຝົນຈະມາເຖິງເພາະລາຄາປຸ່ຍແມ່ນເພີ່ມຂຶ້ນຫຼາຍກວ່າ 17%. ເມື່ອສັງລວມແລ້ວການປ່ຽນແປງດັ່ງກ່າວໄດ້ກະທົບໂດຍກົງຕໍ່ຜູ້ບໍລິໂພກທີ່ຕ້ອງຊື້ໃນລາຄາທີ່ແພງຂຶ້ນທັງສິນຄ້າຜະລິດຢູ່ພາຍໃນ ແລະ ນຳເຂົ້າ. ສິ່ງທີ່ເຫັນໄດ້ຈະແຈ້ງແມ່ນລາຄາສິນຄ້ານຳເຂົ້າປະເພດພະລັງງານ (ນ້ຳມັນລົດ ແລະ ອາຍແກັສ) ແລະປະເພດອາຫານສຳເລັດຮູບທີ່ໄດ້ປ່ຽນແປງຫຼາຍຖ້າສົມທຽບແຕ່ເດືອນມັງກອນ ຫາ ເດືອນເມສາ.

ການປ່ຽນແປງດ້ານລາຄາສິນຄ້າຢູ່ລາວໂດຍລວມສັງເກດເຫັນວ່າແມ່ນໄດ້ຮັບຜົນກະທົບຈາກການປ່ຽນແປງດ້ານອັດຕາແລກປ່ຽນຂອງເງິນກີບກັບເງິນຕາຕ່າງປະເທດ

[8] ບົດລາຍງານສະພາບອັດຕາເງິນເຟີ້ ເດືອນມີນາ 2022 ຈາກ ສູນສະຖິຕິແຫ່ງຊາດ.

[9] ຂໍ້ມູນລາຍງານຈາກກະຊວງພານິດໄທ (2022)

ດັ່ງນັ້ນ ມາດຕະການທີ່ຈະຊ່ວຍຮັບມືກັບສະພາບການດັ່ງກ່າວແມ່ນອາດຕ້ອງໃຊ້ມາດຕະການດ້ານການເງິນ ເຊັ່ນ ເພີ່ມອັດຕາດອກເບ້ຍທະນາຄານໃນຊ່ວງໄລຍະນີ້ໃຫ້ສູງຂຶ້ນເພື່ອດຶງດູດເງິນຕາຕ່າງປະເທດໃຫ້ເຂົ້າສູ່ລະບົບທະນາຄານ, ຄຸ້ມຄອງການແລກປ່ຽນເງິນຕາຕ່າງປະເທດໃຫ້ເຂັ້ມງວດ, ສົ່ງເສີມການຊໍາລະສິນຄ້າສົ່ງອອກໂດຍຜ່ານບັນຊີຢູ່ທະນາຄານພາຍໃນປະເທດ ແລະ ທຸກທຸລະກໍາການຄ້າ-ບໍລິການຕ່າງໆຢູ່ພາຍໃນປະເທດຕ້ອງເປັນເງິນກີບ. ນອກຈາກນັ້ນ, ການສົ່ງເສີມຄວາມເຂັ້ມແຂງໃຫ້ການຜະລິດພາຍໃນປະ ເທດກໍເປັນມາດຕະການທີ່ສໍາຄັນຫຼາຍທັງໃນໄລຍະກາງ ແລະ ຍາວ ເພື່ອເຮັດໃຫ້ປະເທດຫຼຸດຜ່ອນການເພິ່ງພາການນໍາເຂົ້າ ແລະ ກຸ້ມຕົນເອງສໍາລັບສິນຄ້າທີ່ມີຄວາມຈໍາເປັນໃນຊີວິດປະຈໍາວັນ. ມາດຕະການສົ່ງເສີມການສົ່ງອອກສິນຄ້າທ່າແຮງຕ່າງໆຈະຊ່ວຍສ້າງຄວາມເຂັ້ມແຂງດ້ານເງິນຄັງສໍາຮອງຂອງປະເທດ ແລະ ສ້າງຄວາມໝັ້ນທ່ຽງຂອງຄ່າເງິນກີບໃນອະນາຄົດ.



## ເອກະສານອ້າງອີງ


ກະຊວງພານິດໄທ. (2022). Consumer Price Index. Retrieved from www.price.moc.go.th/price/cpi/index_new_e.asp

ທະນາຄານແຫ່ງ ສປປລາວ. (2022). ອັດຕາເງິນເຟີ້. Retrieved from www.bol.gov.la

OPEC. (2022). OPEC Basket Price. Retrieved from www.opec.org/opec_web/en/data_graphs/40.htm

Statista. (2020). Leading Countries Based on Natural Gas Production in 2020. Retrieved from www.statista.com/statistics/264771/top-countries-based-on-natural-gas-production/